

# ປຶ້ມນ້ອຍຄູ່ມືນຳພາ ໄປສູ່ການບໍລິການ ເຂົ້າແຊກແຊງນຳ ແຕ່ເລີ້ມຕົ້ນ

ສຳລັບຄອບຄົວ
ຢູ່ໃນຣັດ
ວໍຊິງຕັນ

## ກົດຫມາຍການສຶກສາ ກ່ຽວກັບບຸກຄົນທີ່ມີ ຄວາມເສັຽອົງຄະ **(IDEA)**

Washington State Department of
Early Learning

Early Support
for Infants
and Toddlers

*ເມື່ອທ່ານຮູ້ຈັກວ່າລູກຂອງທ່ານມີຄວາມຊັກຊ້າ,ທ່ານອາດຈະມີຄວາມຮູ້ສຶກຫລາຍໆແນວ. ທ່ານອາດຈະຮູ້ສຶກວ່າຢ້ານກົວ, ທ່ານອາດຈະບໍ່ເຊື່ອວ່າແມ່ນຫຍັງໄດ້ຖືກເວົ້າອອກມາ ຫລື ວ່າທ່ານອາດຈະຮູ້ສຶກໃຈຮ້າຍຂື້ນຕື່ມອີກ. ອັນນີ້ບໍ່ແມ່ນຄວາມຮູ້ສຶກຜິດທັມມະດາ, ແລະ ທ່ານບໍ່ແມ່ນແຕ່ຄົນດຽວເທົ່ານັ້ນ. ພໍ່ແມ່ຄົນອື່ນມີປະສົບປະການ ຫລື ຄວາມຮູ້ສຶກເຫລົ່ານີ້ຄືກັນ. ມັນມີໂຄງການກວ້າງຂວາງທົ່ວຣັດທີ່ສາມາດຊ່ວຍເຫລືອທ່ານຕິດແທດນຳພໍ່ແມ່ຄົນອື່ນຜູ້ທີ່ມີຄວາມຮູ້ສຶກ ຫລື ຄວາມກັງວົນຄືກັນ. ທ່ານສາມາດໂທຫາເລກໂທອູ້ມຊູພໍ່ແມ່ທີ່ຖືກບົ່ງຢູ່ໃນດ້ານຫລັງຂອງປື້ມຫົວນີ້ເພື່ອຣາຍຣະອຽດ ແລະຄວາມຊ່ວຍເຫລືອເພີ້ມເຕີມ.*

## ມາຍັງພໍ່ແມ່,

ຂ້າພະເຈົ້າຮູ້ຈັກວ່າຖ້າທ່ານມີປື້ມນ້ອຍຫົວນີ້, ທ່ານອາດຈະເປັນໄປໄດ້ທີ່ຈະມີຄວາມກັງວົນກ່ຽວກັບການຂະຍາຍຕົວຂອງລູກຂອງທ່ານ ຫລື ວ່າທ່ານໄດ້ຖືກບອກວ່າລູກຂອງທ່ານມີຄວາມຊັກຊ້າດ້ານການຈະເຣີນເຕີບໂຕ.

ຂ້າພະເຈົ້າຈື່ໄດ້ວ່າຂ້າພະເຈົ້າຖ້ວມທົ້ນ ແລະ ສັບສົນຫລາຍປານໃດເມື່ອລູກສາວຂອງຂ້າພະເຈົ້າ, **Suzi,** ໄດ້ຜ່ານຜ່າການກວດເບິ່ງຄວາມຊັກຊ້າໃນການຈະເຣີນເຕີບໂຕຂອງລາວ. ຂ້າພະເຈົ້າບໍ່ເຂົ້າໃຈຄຳເວົ້າດ້ານວິຊາການຫລາຍໆຄຳທີ່ຖືກໃຊ້, ຖືກປ່ອຍໂດດດ່ຽວວ່າຈະໄດ້ການບໍຣິການແນວໃດ.

ເມື່ອທ່ານໄດ້ຮັບການບໍຣິການ,ໂດຍຜ່ານນາຍຄູ ແລະ ຫມໍບຳບັດປິ່ນປົວທີ່ຊ່ວຍເຫລືອໄດ້ຫລາຍໆຄົນ, ການຈະເຣີນເຕີບໂຕຂອງລາວໄດ້ດີຂື້ນຢ່າງແທ້ຈິງ. ຂ້າພະເຈົ້າພໍໃຈຫລາຍສຳລັບສິ່ງທີ່ລາວເປັນຢູ່ດຽວນີ້ຍ້ອນການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ລາວໄດ້ຮັບໃນປີແຕ່ເລີ້ມຕົ້ນທີ່ສຳຄັນທີ່ສຸດເຫລົ່ານັ້ນ. ອີກຢ່າງນຶ່ງ,ຖືກຕິດແທດນຳພໍ່ແມ່ຄົນອື່ນ ແລະ ແລກປ່ຽນຣາຍຣະອຽດແມ່ນສຳຄັນທີ່ສຸດສຳລັບຄອບຄົວຂອງພວກເຮົາ.

ຂ້າພະເຈົ້າຫວັງວ່າທ່ານຈະໃຊ້ປື້ມນ້ອຍຫົວນີ້ໃຫ້ເປັນສິ່ງຊີ້ນຳໄປສູ່ການບໍຣິການ ແລະ ການອູ້ມຊູທີ່ຄອບຄົວຂອງທ່ານຕ້ອງການ.

*Cassie, ພໍ່ແມ່*

# ຕາຕະລາງຂອງສາຣະບານ


ຄຳແນະນຳ . . . . . . . . . . . . . . . . . . . . . . . . . . . . . . 2

ການເຂົ້າແຊກແຊງແຕ່ເລີ້ມຕົ້ນແມ່ນຫຍັງ? . . . . . . . . . . . . . . . . . . . . . . 3

ຖ້າຫາກວ່າຂ້າພະເຈົ້າມີຄຳຖາມກ່ຽວກັບການຂະຍາຍຕົວຂອງລູກຂອງ
ຂ້າພະເຈົ້າເດ? . . . . . . . . . . . . . . . . . . . . . . . . . . . . . 4

ແມ່ນໃຜມີເງື່ອນໄຂໄດ້ຮັບການເຂົ້າແຊກແຊງແຕ່ເລີ້ມຕົ້ນຢູ່ໃນຣັດວໍຊິງຕັນ? . . . . . . . . 5

ແມ່ນຫຍັງຈະເກີດຂື້ນຕໍ່ໄປ? . . . . . . . . . . . . . . . . . . . . . . . . . 5

ແມ່ນຫຍັງຈະເກີດຂື້ນໃນເວລາອາຍຸ **3** ປີ? . . . . . . . . . . . . . . . . . . . . . 7

ສິດທິຂອງຂ້າພະເຈົ້າແມ່ນຫຍັງແດ່ພາຍໃຕ້ກົດຫມາຍການສຶກສາກ່ຽວກັບບຸກ
ຄົນທີ່ມີຄວາມເສັຽອົງຄະ? . . . . . . . . . . . . . . . . . . . . . . . . . . 8

ຖ້າຫາກວ່າຂ້າພະເຈົ້າບໍ່ເຫັນພ້ອມນຳຄຳຕັດສິນກ່ຽວກັບການບໍຣິການຂອງລູກ
ຂອງຂ້າພະເຈົ້າເດ? . . . . . . . . . . . . . . . . . . . . . . . . . . . 10

ຂ້າພະເຈົ້າສາມາດໄປໃສເພື່ອຄວາມຊ່ວຍເຫລືອ ຫລື
ຣາຍຣະອຽດເພີ້ມເຕີມ? . . . . . . . . . . . . . . . . . . . . . . . . . . 11

ຂ້າພະເຈົ້າສາມາດກ່ຽວພັນນຳຫລາຍກວ່າໄດ້ແນວໃດ? . . . . . . . . . . . . . . . . 12

ມັນຫມາຍຄວາມວ່າຢ່າງໃດ? (ການອະທິບາຍຄຳສັບ) . . . . . . . . . . . . . . . . . 13




*"ມື່ອລູກຊາຍຂອງຂ້ອຍມີອາຍຸໄດ້ຫົກເດືອນ, ລາວຍັງບໍ່ທັນນັ່ງເທື່ອ. ຂ້ອຍຄິດວ່າບາງທີຂ້ອຍໄດ້ເຮັດແນວໃດແນວນຶ່ງຜິດ. ຂ້ອຍພາລາວໄປຫາທ່ານຫມໍຂອງພວກເຮົາຜູ້ທີ່ໄດ້ຊ່ວຍຂ້ອຍຕິດຕໍ່ນຳໂຄງການເຂົ້າແຊກແຊງແຕ່ເລີ້ມຕົ້ນ. ດຽວນີ້ລູກຊາຍຂອງຂ້ອຍກຳລັງໄດ້ຮັບການບໍຣິການທີ່ຊ່ວຍໄດ້ຫລາຍໆແທ້. ລາວທຳຄວາມກ້າວຫນ້າດີຫລາຍ, ແລະ ຂ້ອຍຮຽນຮູ້ຫລາຍຂຶ້ນອີກກ່ຽວກັບສິ່ງທີ່ຂ້ອຍສາມາດເຮັດໄດ້. ຂ້ອຍດຽວນີ້ຮູ້ຈັກວ່າບໍ່ແມ່ນວ່າຍ້ອນຂ້ອຍເຮັດແນວໃດແນວນຶ່ງຜິດຊື່ງີານບໍ່ໄດ້ເຮັດສິ່ງໄວເທົ່າກັນກັບທີ່ເດັກນ້ອຍຄົນອື່ນເຮັດ."*

*Heather, ພໍ່ແມ່*



**ຈຸດປະສົງຕົ້ນຕໍຂອງປື້ມຄູ່ມືຫົວນີ້**ແມ່ນເພື່ອຈະເອົາໃຫ້ທ່ານ ແລະ ຄອບຄົວຂອງທ່ານດ້ວຍການເບິ່ງທົ່ວໄປຂອງໂຄງການອູ້ມຊູແຕ່ເລີ້ມຕົ້ນສຳລັບເດັກທາຣົກ ແລະ ເດັກກຳລັງຮຽນຍ່າງ (ESIT) ຂອງກົມຮຽນຮູ້ແຕ່ເລີ້ມຕົ້ນ. ການເຂົ້າຮ່ວມຂອງຄອບຄົວຂອງທ່ານໃນໂຄງການ ESIT ແມ່ນຕາມສະມັກໃຈຂອງທ່ານ. ຖ້າຫາກວ່າລູກຂອງທ່ານໄດ້ຖືກພົບວ່າມີເງື່ອນໄຂໄດ້ຮັບໂຄງການ ESIT ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນມີໄວ້ໃຫ້ແກ່ລູກ ແລະ ຄອບຄົວຂອງທ່ານເພື່ອຈະແກ້ໄຂຄວາມຊັກຊ້າໃນການຂະຫຍາຍຕົວຂອງລູກຂອງທ່ານ.

ປື້ມຄູ່ມືຫົວນີ້ເອົາໃຫ້ທ່ານດ້ວຍລາຍລະອຽດທົ່ວໄປ ແລະ ສຳຄັນກ່ຽວກັບໂຄງການ ESIT ທົ່ວຣັດ, ລວມທັງລາຍຊື່ຂອງທ່ານບາງຢ່າງໃນຖານະເປັນພໍ່ແມ່. ການບັນລະຍາຍອັນຄົບຖ້ວນ ແລະ ມີລາຍລະອຽດເພີ້ມເຕີມກ່ຽວກັບການປ້ອງກັນຕາມວິທີການ/ສິດທິພໍ່ແມ່ຈະມີໄວ້ໃຫ້ແກ່ທ່ານ ແລະ ຄອບຄົວຂອງທ່ານໄດ້ຖືກເອົາໃຫ້ຢູ່ໃນເອກສານຕ່າງຫາກອີກຊຶ່ງຖືກເອີ້ນວ່າ "ກົດຫມາຍການສຶກສາກ່ຽວກັບບຸກຄົນທີ່ມີຄວາມເສັຽອົງຄະ (IDEA) ພາກ C ການປ້ອງກັນຕາມວິທີການ (ສິດທິພໍ່ແມ່) ." ເມື່ອທ່ານອ່ານປື້ມຄູ່ມືຫົວນີ້, ຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຂອງທ່ານ ຫລື ຄົນໃດຄົນນຶ່ງຈາກໂຄງການ ESIT ສາມາດຕອບຄຳຖາມຕ່າງທີ່ທ່ານອາດຈະມີຢູ່ກ່ຽວກັບໂຄງການ.

ຕະລອດເອກສານອັນນີ້, ຄຳສັບຫລາຍໆຄຳທີ່ກ່ຽວກັບການເຂົ້າແຊກແຊງແຕ່ເລີ້ມຕົ້ນໄດ້ຖືກໃຊ້. ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບຄຳສັບອັນໃດອັນນຶ່ງ ແລະ ຕ້ອງການຢາກຮູ້ຈັກຄວາມຫມາຍ, ໃຫ້ປີ້ນໄປຫນ້າ 13 ຂອງປື້ມຄູ່ມືຫົວນີ້ສຳລັບການຕີຄວາມຫມາຍຂອງຄຳສັບ.



## ໂຄງການອູ້ມຊູແຕ່ເລີ້ມຕົ້ນສຳລັບເດັກທາຣົກ ແລະ ເດັກກຳລັງຮຽນຍ່າງ (ESIT)

ໃນຖານະເປັນພໍ່ແມ່ທ່ານເປັນຄົນສຳຄັນທີ່ສຸດຢູ່ໃນຊີວິດຂອງລູກຂອງທ່ານ. ເດັກນ້ອຍເຕີບໂຕໃຫຍ່ຂື້ນ ແລະ ປ່ຽນແປງຢ່າງວ່ອງໄວໃນຣະຫວ່າງສາມປີທຳອິດຂອງເຂົາເຈົ້າ. ໃຫ້ຄິດເຖິງລູກຂອງທ່ານ ແລະ ເຂົາເຈົ້າໃຫຍ່ຂື້ນແນວໃດ. ທ່ານຮູ້ຈັກລູກຂອງທ່ານດີທີ່ສຸດ. ສັງເກດເບິ່ງສິ່ງຕ່າງໆເຊັ່ນວ່າລູກຂອງທ່ານຍີ້ມແນວໃດ ແລະ ເມື່ອໃດ, ລຸກຂື້ນ, ຍ່າງ, ເວົ້າ, ຫລື ຈັບຈອກນ້ຳແນວໃດ. ສິ່ງທີ່ທ່ານກຳລັງເຫັນຢູ່ແມ່ນວ່າລູກຂອງທ່ານເຕີບໂຕຜ່ານຜ່າຂັ້ນຕອນຈະເຣີ່ມເຕີບໂຕຕ່າງໆແນວໃດ. ເມື່ອລູກມີການຊັກຊ້າໃນການຂະຫຍາຍຕົວ, ການບໍຣິການກໍມີໄວ້ໃຫ້ທົ່ວຣັດໂຄງການອູ້ມຊູໃນຂັ້ນເລີ້ມແຣກສຳລັບເດັກທາຣົກ ແລະ ເດັກນ້ອຍຮຽນຍ່າງຂອງຣັດວໍຊິງຕັນ (ESIT) ປະສານງານຄວາມພະຍາຍາມທົ່ວຣັດເພື່ອຈະຊ່ວຍຄອບຄົວໃຫ້ໄດ້ຮັບການບໍຣິການທີ່ເຂົາເຈົ້າຕ້ອງການ.

## ການເຂົ້າແຊກແຊງແຕ່ເລີ້ມຕົ້ນແມ່ນຫຍັງ?

ການເຂົ້າແຊກແຊງແຕ່ເລີ້ມຕົ້ນຢູ່ໃນຣັດວໍຊິງຕັນແມ່ນການເກັບກຳເອົາການບໍຣິການທີ່ຄອບຄົວອາດຈະຕ້ອງການສຳລັບເດັກທາຣົກ ຫລື ເດັກນ້ອຍກຳລັງຮຽນຍ່າງຜູ້ທີ່ມີຄວາມເສັຽອົງຄະຂອງເຂົາເຈົ້າ. ການເຂົ້າແຊກແຊງແຕ່ເລີ້ມຕົ້ນໃນຣະຫວ່າງປີທຳອິດຂອງຊີວິດຂອງເດັກນ້ອຍສາມາດເຮັດໃຫ້ມີຄວາມແຕກຕ່າງອັນຍິ່ງໃຫຍ່ຢູ່ໃນອະນາຄົດຂອງເດັກຄົນນັ້ນ.

ການເຂົ້າແຊກແຊງແຕ່ເລີ້ມຕົ້ນຈະ:

- ຊ່ວຍທ່ານຊອກຫາການບໍຣິການທີ່ທ່ານຕ້ອງການສຳລັບລູກຂອງທ່ານ.
- ຊ່ວຍທ່ານໃຫ້ເຂົ້າໃຈການຈະເຣີນເຕີບໂຕຂອງລູກຂອງທ່ານ.
- ຊ່ວຍທ່ານອູ້ມຊູການຮຽນຮູ້ ແລະ ການພັດທະນາຂະຫຍາຍໂຕຂອງລູກຂອງທ່ານ ແລະ ການເຂົ້າຮ່ວມຢ່າງເປັນຜົນສຳເຣັດໃນກິຈກັມຢູ່ໃນເຮືອນ ແລະ ຊຸມນຸມຊົນ.

## ກົດຫມາຍການສຶກສາກ່ຽວກັບບຸກຄົນທີ່ມີຄວາມເສັຽອົງຄະ (IDEA) ແມ່ນຫຍັງ?

ໃນປີ 1986 ສະພາໄດ້ດັດແປງກົດຫມາຍຊຶ່ງດຽວນີ້ເປັນທີ່ຮູ້ຈັກກັນວ່າກົດຫມາຍການສຶກສາກ່ຽວກັບບຸກຄົນທີ່ມີຄວາມເສັຽອົງຄະ (IDEA) ແລະ ໄດ້ກໍ່ຕັ້ງໂຄງການຂຶ້ນມາເພື່ອຈະສົ່ງເສີມໃຫ້ຣັດທີ່ຈະເຣັດຣະບົບຂອງການເຂົ້າແຊກແຊງແຕ່ເລີ້ມຕົ້ນທົ່ວຣັດອອກມາ ແລະ ນຳໃຊ້ທົ່ວຣັດສຳລັບເດັກນ້ອຍທີ່ມີຄວາມເສັຽອົງຄະ ແລະ ຄອບຄົວຂອງເຂົາເຈົ້າ. ກົດຫມາຍໄດ້ອອກມາຕາຖານອອກມາສຳລັບຣັດເພື່ອຈະປະຕິບັດຕາມໃນການເອົາການບໍຣິການໃຫ້ແກ່ຄອບຄົວທີ່ມີເດັກທາຣົກ ແລະ ເດັກນ້ອຍກຳລັງຮຽນຍ່າງທີ່ມີຄວາມເສັຽອົງຄະ. ແຕ່ລະຣັດຈະຕັດສິນໃຈທຸກໆປີວ່າເຂົາເຈົ້າຈະສາມາດດຳເນີນຕໍ່ໄປໄດ້ ຫລື ບໍ່ທີ່ຈະເອົາການເຂົ້າແຊກແຊງແຕ່ເລີ້ມຕົ້ນໃຫ້ຕາມທີ່ຖືກຕີຄວາມຫມາຍໄວ້ໂດຍ IDEA. ໂຄງການອູ້ມຊູແຕ່ເລີ້ມຕົ້ນສຳລັບເດັກທາຣົກ ແລະ ເດັກກຳລັງຮຽນຍ່າງ (ESIT) ຂອງກົມຮຽນຮູ້ແຕ່ເລີ້ມຕົ້ນຊີ້ນຳການປະສານງານຂອງຣະບົບການເຂົ້າແຊກແຊງແຕ່ເລີ້ມຕົ້ນທົ່ວຣັດ.

ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໄດ້ຖືກອອກແບບມາເພື່ອຈະຕອບສະນອງຄວາມຕ້ອງການດ້ານການຈະເຣີນເຕີບຂອງເດັກນ້ອຍຜູ້ທີ່ມີເງື່ອນໄຂໄດ້ຮັບແຕ່ລະຄົນ ແລະ ຄວາມຕ້ອງການຂອງຄອບຄົວທີ່ກ່ຽວພັນນຳການເນັ້ນຫນັກໃສ່ການພັດທະນາຂະຫຍາຍໂຕຂອງເດັກນ້ອຍ.

ຖ້າຫາກວ່າທ່ານຕ້ອງການນາຍແປພາສາໃບ້, ຄົນນຶ່ງຕ້ອງຖືກເອົາໃຫ້ແກ່ທ່ານ. ຖ້າຫາກວ່າທ່ານບໍ່ເວົ້າພາສາອັງກິດ, ນາຍພາສາຕ້ອງຖືກເອົາໃຫ້ທ່ານ, ນອກຈາກວ່າມັນເປັນທີ່ແຈ່ມແຈ້ງວ່າເຮັດໃຫ້ບໍ່ໄດ້.



# ຖ້າຫາກວ່າຂ້າພະເຈົ້າມີຄໍາຖາມກ່ຽວກັບການຂະຫຍາຍຕົວຂອງລູກຂອງຂ້າພະເຈົ້າເດ?

ໂທຫາຫົວໜ້າຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຢູ່ໃນເຂດທ້ອງຖິ່ນຂອງທ່ານ. FRC ມີຢູ່ໃນແຕ່ລາວຕີ ແລະ ໂຂງເຂດພື້ນທີ່. ບົດບາດຂອງເຂົາເຈົ້າແມ່ນເພື່ອຈະຊ່ວຍເຫລືອຄອບຄົວຂອງທ່ານໃຫ້ໄດ້ຮັບການບໍລິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ລູກຂອງທ່ານອາດຈະຕ້ອງການ. ເພື່ອຈະຊອກຫາຊື່ຂອງຫົວໜ້າທ້ອງຖິ່ນ FRC ຂອງທ່ານ,ໂທຫາເລກສາຍດ່ວນຂອງສຸຂະພາບຄອບຄົວໄດ້ທີ່ 1-800-322-2588. ທ່ານຍັງສາມາດໂທຫາກົມອະນາມັຍທ້ອງຖິ່ນ ຫລື ໜ່ວດໂຮງຮຽນຂອງທ່ານໄດ້ອີກຄືກັນ.

ເວົ້ານໍາຜູ້ໃຫ້ການປິ່ນປົວສຸຂະພາບຂອງທ່ານກ່ຽວກັບຄວາມກັງວົນຂອງທ່ານ. ເຂົາເຈົ້າສາມາດເອົາການກວດກັ່ນເບິ່ງໃຫ້ ຫລື ແນະນໍາບ່ອນຊ່ວຍເຫລືອບ່ອນອື່ນ.ຖ້າຫາກວ່າທ່ານບໍ່ມີທ່ານໝໍ ແລະ ຕ້ອງການລາຍລະອຽດ ຫລື ຄວາມຊ່ວຍເຫລືອເພີ້ມເຕີມ, ໃຫ້ໂທຫາເລກສາຍດ່ວນຂອງສຸຂະພາບຄອບຄົວທີ່ຖືກບົ່ງຢູ່ຂ້າງເທິງນີ້. ທ່ານບໍ່ຕ້ອງມີການສົ່ງຕໍ່ຈາກທ່ານໝໍເພື່ອຈະໄດ້ຮັບການເຂົ້າແຊກແຊງແຕ່ເລີ້ມຕົ້ນ. ທ່ານຈະສົ່ງຕົວທ່ານໄປເອງກໍໄດ້ໃນຖານະເປັນພໍ່ແມ່.

## ການກວດກັ່ນເບິ່ງແມ່ນຫຍັງ?

ການກວດກັ່ນເບິ່ງແມ່ນການເບິ່ງໂດຍໄວໆວ່າລູກຂອງທ່ານຮຽນຮູ້ ແລະ ເຕີບໂຕແນວໃດ.ການກວດກັ່ນເບິ່ງຈະຖືກເຮັດລົງໄປໂດຍບຸກຄົນຜູ້ທີ່ຖືກຝຶກຝົນມາເພື່ອຈະພິຈາລະນາເບິ່ງວ່າລູກຂອງທ່ານຂະຫຍາຍຕົວແນວໃດ. ຖ້າຫາກວ່າການຂະຫຍາຍຕົວຂອງລູກຂອງທ່ານເປັນຄວາມເປັນຫ່ວງ, FRC ຂອງທ່ານສາມາດແລກປ່ຽນລາຍລະອຽດວ່າຈະເອົາການຕີລາຄາປະເມີນຜົນສໍາລັບລູກຂອງທ່ານໄດ້ແນວໃດ

## ການຕີລາຄາປະເມີນຜົນແມ່ນຫຍັງ?

ການຕີລາຄາປະເມີນຜົນຈະເອົາການກວດເບິ່ງຢ່າງເລິກໆໃນການຂະຫຍາຍຕົວຂອງລູກຂອງທ່ານ. ການຕີລາຄາປະເມີນຜົນຈະຖືກເຮັດນໍາທ່ານ, ລູກຂອງທ່ານແລະ ຜູ້ຊ່ຽວຊານດ້ານການເຂົ້າແຊກແຊງແຕ່ເລີ້ມຕົ້ນ.

ການຕີລາຄາປະເມີນຜົນເບິ່ງການຂະຫຍາຍຕົວໃນຈໍາພວກເຫລົ່ານີ້:

- ຄວາມຮັບຮູ້-ຄວາມສາມາດທີ່ຈະຮຽນຮູ້ ແລະ ລູກຂອງທ່ານຮຽນຮູໄດ້ແນວໃດ
- ຮ່າງກາຍ-ຄວາມສາມາດທີ່ຈະເໜັງຕີງ, ເບິ່ງ ແລະ ຟັງ
- ການຕິດຕໍ່-ຄວາມສາມາດທີ່ຈະເຂົ້າໃຈພາສາແລະສະແດງຄວາມຕ້ອງການອອກມາສັງຄົມ ຫລື ຈິດໃຈ່-ຄວາມສາມາດທີ່ຈະຕິດຕໍ່ພົວພັນນໍາຄົນອື່ນ
- ຄວາມຊໍານານປັບຕົວ-ຄວາມສາມາດທີ່ຈະນຸ່ງເຄື່ອງ, ກິນ ແລະ ບົວລະບັດຕົນເອງ
- ການຕີລາຄາເປັນຫົນທາງທີ່ຈະເບິ່ງວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບການເຂົ້າແຊກແຊງແຕ່ເລີ້ມຕົ້ນ ຫລື ບໍ່

ການຕີລາຄາຈະເກີດຂື້ນດ້ວຍການອະນຸຍາດທາງໜັງສືຂອງທ່ານເທົ່ານັ້ນໂດຍບໍ່ຄິດຄ່າແນວໃດນໍາທ່ານ.

## ຄໍາແນະສໍາລັບການວາງແຜນການຕີລາຄາ:

- ຂໍເອົາຄວາມຊ່ວຍເຫລືອນໍາຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຂອງທ່ານ.
- ຖືເອົາມານໍາຄໍາຖາມ ຫລື ຄວາມກັງວົນຕ່າງໆທີ່ທ່ານອາດຈະມີຢູ່ກ່ຽວກັບການຂະຫຍາຍຕົວຂອງລູກຂອງທ່ານ.
- ແລກປ່ຽນລາຍລະອຽດທຸກໆຢ່າງຊຶ່ງທ່ານຄິດວ່າແມ່ນສໍາຄັນ: ບັນທຶກພະຍາບານ, ປື້ມເດັກນ້ອຍ, ແຜນຜັງການເຕີບໂຕ ຫລື ລາຍງານອື່ນໆ.
- ຕັດສິນໃຈວ່າເວລາໃດ ແລະ ສະຖານທີ່ບ່ອນໃດທີ່ສະດວກສໍາລັບທ່ານ ແລະ ຄອບຄົວຂອງທ່ານ.
- ເຊີນໃຫ້ມານໍາສະມາຊິກຄອບຄົວຄົນອື່ນ, ໝູ່ເພື່ອນ ຫລື ຄົນອູ້ມຊູ ຖ້າທ່ານປະສົງ.
- ແຈ້ງບອກ FRC ຂອງທ່ານຖ້າຫາກວ່າທ່ານຕ້ອງການນາຍພາສາແນວໃດ ຫລື ການຊ່ວຍເຫລືອອື່ນໆ.

ຫລັງຈາກການຕີລາຄາ, ທ່ານ ແລະ ສະມາຊິກຂອງຄະນະທີມງານຄົນອື່ນຈະເວົ້າກ່ຽວກັບສິ່ງທີ່ລູກຂອງທ່ານກໍາລັງເຮັດຢູ່ ແລະ ຊີ້ບອກຄວາມກັງວົນຕ່າງໆ. ຖ້າມີແນວໃດທີ່ຊັກຊ້າ, ລູກຂອງທ່ານອາດຈະມີເງື່ອນໄຂໄດ້ຮັບການເຂົ້າແຊກແຊງແຕ່ເລີ້ມຕົ້ນ. ທ່ານມີທາງເລືອກທີ່ຈະຮັບເອົາ ຫລື ປະຕິເສດການບໍລິການ.

# ແມ່ນໃຜມີເງື່ອນໄຂໄດ້ຮັບການເຂົ້າແຊກແຊງແຕ່ເລີ້ມຕົ້ນຢູ່ໃນຣັດວໍຊິງຕັນ?

ເພື່ອຈະມີເງື່ອນໄຂໄດ້ຮັບ, ເດັກນ້ອຍຕ້ອງມີການຊັກຊ້າ 25 ເປີເຊັນ ຫລື ສະແດງໃຫ້ເຫັນວ່າມີການປ່ຽນແປງຂື້ນລົງໃນມາຕຖານ 1.5 ຕ່ຳກວ່າອາຍຸຂອງເຂົາເຈົ້າໃນຈຳພວກການຂະຍາຍຕົວຈຳພວກນື່ງຫລື ຫລາຍກວ່າ. ເດັກນ້ອຍຍັງອາດຈະມີເງື່ອນໄຂໄດ້ຮັບອີກຄືກັນຖ້າຫາກວ່າເຂົາເຈົ້າມີສະພາບທາງຮ່າງກາຍ ຫລື ມັນສະມອງ, ເຊັ່ນວ່າດາວນ໌ຊິງໂດຣມ, ຊື່ງເປັນທີ່ຮູ້ຈັກກັນວ່າຈະກໍ່ໃຫ້ເກີດການຊັກຊ້າໃນການຈະເຣີນເຕີບໂຕ.

## ການຕີຣາຄາປະເມີນຜົນແມ່ນຫຍັງ?

ການຕີຣາຄາປະເມີນຜົນແມ່ນການເກັບກຳເອົາຣາຍຣະອຽດຈາກທ່ານ, ຄົນອື່ນທີ່ຮູ້ຈັກລູກຂອງທ່ານ, ແລະ ຈາກວິທີການທີ່ຜູ້ໃຫ້ການປິ່ນປົວເຂົ້າແຊກແຊງ

ແຕ່ເລີ້ມຕົ້ນອາດຈະໃຊ້ເພື່ອຈະເຂົ້າໃຈການປະພຶດແລະ ການຂະຍາຍຕົວຂອງລູກຂອງທ່ານໃນສິ່ງທີ່ເຮັດປະຈຳ ແລະ ກິຈກັມທັມມະດາຫລາຍໆຢ່າງ. ການຕີຣາຄາປະເມີນຜົນເບິ່ງວ່າລູກຂອງທ່ານຮຽນຮູ້ຄວາມສະລາດແນວໃຫມ່ຢ່າງໃດ, ເຂົາເຈົ້າພົວພັນນຳຄົນອື່ນແນວໃດ ແລະ ວ່າເຂົາເຈົ້າມັກຫຍັງລວມທັງແມ່ນຫຍັງທີ່ເຂົາເຈົ້າພົບວ່າຫນັກໃຈ ຫລື ເປັນບັນຫາ. ຣາຍຣະອຽດຂອງການຕີຣາຄາປະເມີນຜົນຈະຊ່ວຍເຫລືອທ່ານ ແລະ ຄະນະທີມງານຕັດສິນວ່າຜົນອອກມາ (ການປ່ຽນແປງ) ແນວໃດທີ່ທ່ານຢາກເຮັດໃສ່ ແລະການບໍຣິການ ແລະ ການອູ້ມຊູທີ່ສາມາດຊ່ວຍບັນລຸຜົນສຳເຣັດຜົນອອກມາເຫລົ່ານີ້.

ການຕີຣາຄາປະເມີນຜົນຍັງຈະລວມເອົາວິທີການດຳເນີນຕໍ່ໄປທີ່ຖືກໃຊ້ເພື່ອຈະພິຈາຣະນາເບິ່ງຜົນຄືບຫນ້າຂອງລູກຂອງທ່ານໄປສູ່ການບັນລຸຜົນສຳເຣັດໃນຜົນອອກມາ ແລະ ຮັບປະກັນວ່າການບໍຣິການ ແລະ ການອູ້ມຊູທີ່ທ່ານໄດ້ຮັບຢູ່ຈະຊ່ວຍເຫລືອລູກຂອງທ່ານໃຫ້ຄືບຫນ້າຂື້ນ.

# ແມ່ນຫຍັງຈະເກີດຂື້ນຕໍ່ໄປ?

ທ່ານອາດຈະຖາມວ່າ, "ການບໍຣິການແນວໃດແດ່ທີ່ການເຂົ້າແຊກແຊງແຕ່ເລີ້ມຕົ້ນລວມເອົາ?" ການບໍຣິການທີ່ລູກຂອງທ່ານຕ້ອງການອາດຈະລວມເອົາ:

- ເຄື່ອງເທັກໂນໂລຈີຊ່ວຍ ແລະ ການບໍຣິການດ້ານເທັກໂນໂລຈີຊ່ວຍ
- ວິຊາການດ້ານຫູ (ການຟັງສຽງ)
- ການຊີ້ບອກແຕ່ຕົ້ນ, ການກວດກັ່ນເບິ່ງ ແລະ ການບໍຣິການຕີຣາຄາປະເມີນຜົນ
- ການຝຶກຝົນຄອບຄົວ, ການປຶກສາ ແລະ ການຢ້ຽມຢາມເຮືອນ
- ການບໍຣິການດ້ານສຸຂະພາບ
- ການບໍຣິການພະຍາບານເທົ່ານັ້ນສຳລັບຈຸດປະສົງຂອງການກວດເບິ່ງອາການ ຫລື ການຕີຣາຄາປະເມີນຜົນ
- ກາບໍຣິການຜູ້ເຖົ້າ
- ການບໍຣິການດ້ານອາຫານການກິນ
- ການບຳບັດວິຊາຊີບ
- ການບຳບັດຮ່າງກາຍ
- ການບໍຣິການດ້ານໂຣກຈິດ
- ການປະສານງານການບໍຣິການ (ການປະສານງານຊ່ວຍເຫລືອຄອບຄົວ)
- ການບໍຣິການວຽກງານສັງຄົມ
- ຄຳຊີ້ນຳພິເສດ
- ການປາກເວົ້າ-ວິທະຍາການພາສາປາກເວົ້າ
- ການຂົນສົ່ງໄປມາ ແລະ ຄ່າໃຊ້ຈ່າຍທີ່ກ່ຽວພັນນຳທີ່ຈຳເປັນເພື່ອຈະເຮັດໃຫ້ເດັກນ້ອຍ ແລະ ຄອບຄົວທີ່ຈະໄດ້ຮັບການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ.
- ການບໍຣິການດ້ານສາຍຕາ

ກະຣຸນາຕິດຕໍ່ຫາຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຢູ່ໃນເຂດຂອງທ່ານເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບການບໍຣິການຂ້າງເທິງນີ້.



# ແມ່ນຫຍັງຈະເກີດຂື້ນຕໍ່ໄປ? (ຕໍ່)

## ແຜນການບໍລິການຄອບຄົວສ່ວນບຸກຄົນ (IFSP)

ຖ້າມີເງື່ອນໄຂໄດ້ຮັບ, ລູກຂອງທ່ານຈະໄດ້ຮັບ IDEA ຂອງການເຂົ້າແຊກແຊງແຕ່ເລີ້ມຕົ້ນ. ທ່ານຈະໄດ້ພົບກັນກັບຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຂອງທ່ານ ແລະ ຜູ້ໃຫ້ການບໍລິການອື່ນໆ. ຄອບຄົວຂອງທ່ານ, ພ້ອມດ້ວຍຄົນອື່ນ, ຈະຂຽນແຜນການ, ຊຶ່ງຖືກເອີ້ນວ່າແຜນການບໍລິການຄອບຄົວສ່ວນບຸກຄົນ(IFSP). ໃຫ້ເຮັດວຽກນຳ FRC ຂອງທ່ານເພື່ອຈະໃຫ້ແນ່ໃຈວ່າແຜນການຈະສະທ້ອນເຖິງຄວາມກັງວົນ, ຄວາມສົນໃຈ ແລະ ຄຸນຄ່າຂອງຄອບຄົວຂອງທ່ານ.

ການບໍລິການເລີ້ມຕົ້ນເມື່ອເວລາທ່ານໄດ້ເຫັນພ້ອມນຳ IFSP ແລະ ຍິນຍອມຮັບເອົາການບໍລິການ.

IFSP ແມ່ນການດຳເນີນການທີ່ດຳເນີນຕໍ່ໄປຊຶ່ງຕອບສະນອງຄວາມຕ້ອງການທີ່ປ່ຽນແປງຢູ່ຂອງລູກ ແລະ ຄອບຄົວຂອງທ່ານ. ມັນຈະຖືກກວດເບິ່ງຄືນຢ່າງຫນ້ອຍທຸກໆຫົກເດືອນ ແລະ ຖືກຂຽນໃຫມ່ໃນແຕ່ລະປີ.



IFSP ລວມເອົາ:

- **ຣະດັບຂອງການທຳງານປັດຈຸບັນ-**ສິ່ງທີ່ລູກຂອງທ່ານກຳລັງເຮັດຢູ່ດຽວນີ້.
- **ຄຳແຈ້ງການຂອງຄອບຄົວ-**ຄຳແຈ້ງການຂອງຄວາມກັງວົນຂອງຄອບຄົວ, ຣະດັບຄວາມສຳຄັນ ແລະ ຊັບຊົນບັດ; ຄຳແຈ້ງການຂອງຄອບຄົວຂອງທ່ານແມ່ນພາກສ່ວນສຳຄັນຂອງ IFSP, ແຕ່ວ່າທ່ານອາດຈະເລືອກເອົາທີ່ຈະບໍ່ມີກໍໄດ້.
- **ຜົນອອກມາ-**ການປ່ຽນແປງທີ່ທ່ານຢາກຈະເຫັນສຳລັບລູກຂອງທ່ານແລະຄອບຄົວ.
- **ການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ຕ້ອງການ-**ດົນປານໃດເທື່ອນຶ່ງ ແລະ ດົນນານປານໃດ, ມັນຈະເກີດຂຶ້ນຢູ່ໃສ, ແລະ ແມ່ນໃຜຈະຈ່າຍໃຫ້ (ບ່ອນຊ່ວຍເຫລືອຕ່າງກັນຫລາຍໆບ່ອນອອກເງິນທຶນໃຫ້ການເຂົ້າແຊກແຊງແຕ່ເລີ້ມຕົ້ນ) . ທ່ານຈະຮັບເອົາ ຫລື ປະຕິເສດການບໍລິການຕ່າງໆທີ່ຖືກສະເນີໃຫ້.
- **ສະພາບແວດລ້ອມຕາມທັມມະຊາດ-**ຄຳແຈ້ງການກ່ຽວກັບສະພາບແວດລ້ອມຕາມທັມມະຊາດໃນນັ້ນການເຂົ້າແຊກແຊງແຕ່ເລີ້ມຕົ້ນຈະຖືກເອົາໃຫ້. IFSPs ຕ້ອງລວມເອົາຫນັງສືຢັ້ງຢືນຖ້າຫາກວ່າການບໍລິການຈະບໍ່ຖືກເອົາໃຫ້ຢູ່ໃນສະພາບແວດລ້ອມຕາມທັມມະຊາດ.
- **ຂອບເຂດເວລາ-**ເມື່ອໃດການບໍລິການຈະເລີ້ມຕົ້ນ ແລະ ຈົບລົງ, ແລະ ເມື່ອໃດທ່ານຈະເບິ່ງແຜນການຂອງທ່ານໃຫມ່ອີກ.
- **ການບໍລິການອື່ນໆທີ່ຕ້ອງການທີ່ບໍ່ໄດ້ຖືກອອກເງິນທຶນໃຫ້ໂດຍ IDEA –** ແມ່ນໃຜສາມາດຊ່ວຍເຫລືອທ່ານຊອກເອົາການບໍລິການເຫລົ່ານີ້.
- **ຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) –** ຖືກບົ່ງຊື່ຢູ່ໃນແຜນການຂອງທ່ານ.
- **ແຜນການຜັນປ່ຽນກ່ອນອາຍຸ 3 ປີ-**ການຊອກຫາ ແລະ ການວາງແຜນສຳລັບການບໍລິການຫລັງຈາກລູກຂອງທ່ານມີອາຍຸ 3 ປີ.

ທ່ານຢາກຈະເຊີນເອົາສະມາຊິກຄອບຄົວຄົນອື່ນ, ຫມູ່ເພື່ອນ ຫລື ຄົນອູ້ມຊູມາປະຊຸມນຳ. ຖືເອົາຣາຍຣະອຽດຕ່າງໆມານຳກ່ຽວກັບລູກຂອງທ່ານຊຶ່ງທ່ານຮູ້ສຶກວ່າສຳຄັນ.

## ແມ່ນຫຍັງຈະເກີດຂຶ້ນໃນເວລາອາຍຸ 3 ປີ?

ຢ່າງໜ້ອຍຫົກຫາເກົ້າເດືອນກ່ອນທີ່ລູກຂອງທ່ານຈະຮອດ 3 ປີ, ຜູ້ປະສານງານຊ່ວຍຄອບຄົວຂອງທ່ານ (FRC) ຈະຊ່ວຍເຫລືອທ່ານໃນການວາງແຜນການຍ້າຍໄປຫາຜູ້ໃຫ້ການບໍລິການຕໍ່ໄປ ຫລືຫ້ອງການບ່ອນໃຫມ່ທີ່ຮັບໃຊ້ລູກຂອງທ່ານ. ອັນນີ້ສາມາດປ່ຽນແປງວ່າການບໍລິການຈະຖືກເອົາໃຫ້ຢູ່ໃສ ແລະ ແນວໃດ. ໃນການເຂົ້າແຊກແຊງແຕ່ເລີ້ມຕົ້ນ, ການປ່ຽນແປງອັນນີ້ໄດ້ຖືກເອີ້ນວ່າການຜັນປ່ຽນ. IDEA ກໍານົດໃຫ້ມີແຜນການເປັນຫນັງສືສໍາລັບການຜັນປ່ຽນອັນນີ້.ການປະຊຸມແຜນການຜັນປ່ຽນຕ້ອງມີຂຶ້ນຢ່າງຫນ້ອຍ 90 ວັນກ່ອນທີ່ລູກຂອງທ່ານຈະຮອດອາຍຸ 3 ປີ. ແຜນການຜັນປ່ຽນຈະຊີ້ບອກການສຶກສາພິເສດ ຫລື ການບໍລິການທີ່ຕັ້ງຢູ່ຕາມຊຸມນຸມຊົນຊຶ່ງລູກຂອງທ່ານອາດຈະຕ້ອງການ.

FRC ຂອງທ່ານຈະຂໍໃຫ້ທ່ານເຊັນຊື່ໃສ່ໃບຟອມອະນຸຍາດ, ເພື່ອວ່າຫ້ອງການບ່ອນຕໍ່ໄປ ຫລື ຜູ້ໃຫ້ການບໍລິການຄົນຕໍ່ໄປສາມາດຖືກຕິດຕໍ່ຫາເພື່ອຈະວາງແຜນການຜັນປ່ຽນ. ການປະຊຸມກັນລະຫວ່າງທ່ານ, FRC ຂອງທ່ານ, ຜູ້ໃຫ້ການບໍລິການ, ແລະ ຫມວດໂຮງຮຽນທ້ອງຖິ່ນຈະຖືກຈັດຂຶ້ນ.

ຫມວດໂຮງຮຽນຈະພິຈາຣະນາເບິ່ງວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບການບໍລິການດ້ານການສຶກສາພິເສດກ່ອນເຂົ້າໂຮງຮຽນ ຫລື ບໍ່. ເຂົາເຈົ້າຈະເວົ້າລົມກ່ຽວກັບຜົນອອກມາຂອງການກວດເບິ່ງຂອງເຂົາເຈົ້ານໍາທ່ານ ແລະ ເອົາຣາຍຣະອຽດໃຫ້ທ່ານກ່ຽວກັບສິດທິຂອງທ່ານ.ຖ້າຫາກວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບ, ການບໍລິການຂອງເຂົາເຈົ້າຈະຖືກເອົາໃຫ້ໂດຍຜ່ານໂຄງການການສຶກສາສ່ວນບຸກຄົນ (IEP).

FRC ຂອງທ່ານຈະຊ່ວຍເຫລືອທ່ານໃນການວາງແຜນການຍ້າຍໄປຫາການບໍລິການທີ່ອາດເປັນໄປໄດ້ແນວອື່ນໆຖ້າຫາກວ່າລູກຂອງທ່ານບໍ່ມີເງື່ອນໄຂໄດ້ຮັບການບໍລິການດ້ານການສຶກສາພິເສດກ່ອນເຂົ້າໂຮງຮຽນ.




## ຄໍາແນະນໍາສໍາລັບການປະຊຸມເຣື່ອງການຜັນປ່ຽນ:

- ຮີບໂຮມເອົາຣາຍຣະອຽດຫລາຍເທົ່າຫລາຍທີ່ເປັນໄປໄດ້ກ່ຽວກັບການປ່ຽນແປງທີ່ຖືກວາງອອກມາ.
- ຖາມເບິ່ງກ່ຽວກັບທາງເລືອກຂອງໂຄງການທີ່ອາດເປັນໄປໄດ້ ຫລື ຫົນທາງເລືອກເອົາ.
- ຖາມເບິ່ງກ່ຽວກັບວ່າການຝຶກຝົນ ແລະ ການອູ້ມຊູແນວໃດແດ່ທີ່ໂຄງການໃຫມ່ມີໄວ້ໃຫ້ແກ່ຄອບຄົວ.
- ແວ່ໄປເບິ່ງໂຄງການໃຫມ່ກ່ອນການປ່ຽນແປງ.
- ຂໍເອົາຫນັງສືເອກສານ ແລະ ຮຽນຮູ້ວິທີການສໍາລັບການເຂົ້າໄປ ແລະ ການເຂົ້າຮ່ວມໃນໂຄງການໃຫມ່.
- ເອົາຣາຍຣະອຽດກ່ຽວກັບລູກຂອງທ່ານໃຫ້ຫລາຍເທົ່າທີ່ຈະຫລາຍໄດ້ໃຫ້ໂຄງການໃຫມ່.

# ສິດທິຂອງຂ້າພະເຈົ້າແມ່ນຫຍັງແດ່ພາຍໄຕ້ກົດຫມາຍການສຶກສາກ່ຽວກັບບຸກຄົນທີ່ມີຄວາມເສັຽອົງຄະ? (ການປ້ອງກັນຕາມວິທີການ)

ຂົດຫມາຍສ່ວນຫລາຍລວມເອົາສິດທິສຳລັບພົລເມືອງແລະ IDEA ແມ່ນບໍ່ມີຫຍັງແຕກຕ່າງ.ຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຂອງທ່ານຈະເອົາໃຫ້ທ່ານ "ກົດຫມາຍການສຶກສາກ່ຽວກັບບຸກຄົນທີ່ມີຄວາມເສັຽອົງຄະ (IDEA) ພາກ C ການປ້ອງກັນຕາມວິທີການ (ສິດທິພໍ່ແມ່)." ຊຶ່ງຈະອະທິບາຍສິດທິຂອງທ່ານ.

## ຕົວຢ່າງຂອງສິດທິຂອງທ່ານພາຍໄຕ້ **IDEA** ລວມເອົາສິດທິຂອງທ່ານທີ່ຈະ:

- ເປັນຜູ້ທຳການຕັດສິນໃຈຄົນທຳອິດ ແລະ ສຸດທ້າຍສຳລັບລູກຂອງທ່ານ.
- ເຂົ້າເຖິງການບໍຣິການຊຶ່ງລວມເອົາ:
  - ການຊີ້ບອກຄວາມກັງວົນແຕ່ເລີ້ມຕົ້ນ/ການພົບຂອງເດັກນ້ອຍ
  - ການຕີຣາຄາ ແລະ ການປະເມີນຜົນຫລາຍໆຢ່າງພ້ອມກັນທັນເວລາ
  - ການພິຈາຣະນາເບິ່ງເງື່ອນໄຂຮັບເອົາຂອງເດັກນ້ອຍ
  - ຜູ້ປະສານງານຊ່ວຍເຫລືອຄອບຄົວ/ການປະສານງານ



## ຖ້າຫາກວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບ,ທ່ານມີສິດທີ່:

- ແຜນການບໍຣິການຄອບຄົວສ່ວນບຸກຄົນ(IFSP).
- ການປະສານງານຊ່ວຍເຫລືອຄອບຄົວທີ່ດຳເນີນຕໍ່ໄປນຳ FRC, ຈົນກວ່າຮອດວັນເກີດປີທີສາມຂອງລູກຂອງທ່ານ.
- ຂໍເອົາຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC) ຄົນໃຫມ່.
- ຮັບເອົາການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ກ່ຽວພັນນຳການຈະເຣີນເຕີບໂຕຂອງລູກຂອງທ່ານ.
- ຮັບເອົາ ຫລື ປະຕິເສດການບໍຣິການທີ່ລູກຂອງທ່ານແລະ ຄອບຄົວຈະໄດ້ຮັບຕາມທີ່ຖືກພິຈາຣະນາອອກມາໂດຍຜ່ານການດຳເນີນການ IFSP.
- ປະຕິເສດການບໍຣິການບາງຢ່າງທີ່ຖືກແນະນຳບອກໂດຍຄະນະທີມງານ IFSP ແລະຍັງຈະໄດ້ຮັບການບໍຣິການແນວອື່ນ.
- ເຂົ້າຮ່ວມໃນການປະຊຸມທຸກໆເທື່ອທີ່ກ່ຽວກັບການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງລູກຂອງທ່ານ ແລະ ການປ່ຽນແປງໃນການເອົາການບໍຣິການໃຫ້.
- ມີການປະຊຸມໃນເວລາ ແລະ ສະຖານທີ່ເຫັນພ້ອມນຳຄອບຄົວຂອງທ່ານ.
- ຮັບເອົາໃບແຈ້ງການ ແລະ ເອກສານ IFSP ເປັນພາສາກຳເນີດຂອງທ່ານ ຫລື ແບບການຕິດຕໍ່ກັນທີ່ຖືກໃຊ້ຢູ່ໃນເຮືອນຂອງທ່ານ.

## ທ່ານຍັງມີການປ້ອງກັນອີກຄືກັນກ່ຽວກັບບັນທຶກການເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງລູກຂອງທ່ານ. ອັນນີ້ລວມເອົາສິດທິຂອງທ່ານທີ່ຈະ:

- ກວດເບິ່ງບັນທຶກຄືນ ແລະ ຂໍຮ້ອງເອົາການດັດແປງໃສ່ບັນທຶກ.
- ຮັບເອົາໂກປີ້ຂອງບັນທຶກ.
- ຖືກແຈ້ງບອກກ່ຽວກັບຊະນິດ ແລະ ສະຖານທີ່ຂອງບັນທຶກທີ່ຖືກເກັບກຳເອົາມາ, ຮັກສາໄວ້ ຫລື ຖືກໃຊ້ຢູ່ໃນໂຄງການ, ຜູ້ທີ່ຢູ່ໃນໂຄງການມີການເຂົ້າເຖິງບັນທຶກເຫລົ່ານັ້ນ, ແລະ ເມື່ອເຂົາເຈົ້າເຫັນບັນທຶກເຫລົ່ານັ້ນ.
- ຮ້ອງຂໍເອົາຣາຍຣະອຽດກ່ຽວກັບວ່າແມ່ນໃຜແດ່ໄດ້ເຫັນບັນທຶກ ຫລື ໂກປີ້ຂອງບັນທຶກ.
- ຄັດຄ້ານຣາຍຣະອຽດຢູ່ໃນບັນທຶກທີ່ທ່ານເຊື່ອວ່າບໍ່ຖືກຕ້ອງແນ່ນອນ ຫລື ພາໃຫ້ເຊື່ອໄປໃນທາງຜິດ ຫລື ລ່ວງລະເມີດສິດສ່ວນຕົວ ຫລື ສິດທິຂອງລູກ ຫລື ຄອບຄົວຂອງທ່ານ.

  ບັນທຶກການເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງລູກຂອງທ່ານລວມເອົາ, ລວມທັງສິ່ງອື່ນໆ:

  - ລາຍງານການກວດກັ່ນເບິ່ງ
  - ລາຍງານການຕີຣາຄາ
  - ຣາຍຣະອຽດການຕີຣາຄາປະເມີນຜົນ
  - ການພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ
  - ຣາຍຣະອຽດທຸກໆຢ່າງທີ່ເປັນພາກສ່ວນນຶ່ງຂອງ IFSP

## ຣາຍຣະອຽດກ່ຽວກັບຄອບຄົວຂອງທ່ານແມ່ນເປັນຄວາມລັບ. ທ່ານມີສິດທີ່ຕໍ່:

- ການເປັນຄວາມລັບຂອງຣາຍຣະອຽດສ່ວນຕົວ ແລະ ຊີ້ບອກຕົວໄດ້ລວມເອົາ:
  - ຊື່ຂອງລູກຂອງທ່ານ,ຕົວທ່ານເອງ ຫລື ສະມາຊິກຄອບຄົວຄົນອື່ນ.
  - ທີ່ຢູ່ຂອງລູກຂອງທ່ານ.
  - ລັກສະນະຮູບຮ່າງສ່ວນຕົວຕ່າງໆ ຫລື ຣາຍຣະອຽດອື່ນທີ່ຈະເຮັດໃຫ້ເປັນໄປໄດ້ທີ່ຈະຊີ້ບອກຕົວລູກຂອງທ່ານດ້ວຍຄວາມແນ່ນອນທີ່ມີເຫດຜົນໄດ້.
- ຮ້ອງຂໍເອົານະໂຍບາຍ ແລະ ວິທີທາງທ້ອງຖິ່ນກ່ຽວກັບວ່າການເປັນຄວາມລັບຈະຖືກປົກປ້ອງໄວ້ແນວໃດ.
- ເອົາໃບຫນັງສືຍິນຍອມທີ່ຖືກແຈ້ງບອກໃຫ້ສຳລັບການແລກປ່ຽນ ຫລື ການແບ່ງປັນເອົາຣາຍຣະອຽດ ຫລື ບັນທຶກໃຫ້.

ເພີ້ມເຕີມໃສ່ສິດທິຂອງພໍ່ແມ່/ຄອບຄົວ, ເດັກນ້ອຍມີສິດໃນພໍ່ແມ່ແທນທີ່ຖ້າຫາກວ່າ:

- ບໍ່ມີພໍ່ແມ່ຄົນໃດຖືກຊີ້ບອກຕົວ.
- ຜູ້ໃຫ້ການບໍຣິການ/ຫ້ອງການຂອງຫລວງ, ຫລັງຈາກຄວາມພະຍາຍາມທີ່ເຫມາະສົມ, ບໍ່ສາມາດຊອກຫາເຫັນບ່ອນຢູ່ຂອງພໍ່ແມ່.
- ເດັກນ້ອຍເປັນຄົນຢູ່ໃນຄວາມຄຸ້ມຄອງຂອງຣັດ.

## ຖ້າຫາກວ່າຂ້າພະເຈົ້າບໍ່ເຫັນພ້ອມນຳຄຳຕັດສິນກ່ຽວກັບການບໍລິການຂອງລູກຂອງຂ້າພະເຈົ້າເດ?

ກະຣຸນາເວົ້ານຳຜູ້ປະສານງານຊ່ວຍເຫລືອຄອບຄົວ **(FRC)** ຂອງທ່ານກ່ຽວກັບບັນຫາ. ຖ້າຫາກວ່າມັນບໍ່ໄດ້ຜົນ ຫລື ວ່າທ່ານບໍ່ຮູ້ສຶກສະບາຍໃຈ, ທ່ານຈະເລືອກທີ່ຈະໃຊ້ທາງເລືອກຕໍ່ລົງໄປນີ້ທາງໃດທາງນຶ່ງ ຫລື ທັງຫມົດ:

- **ການເຈຣະຈາໄກ່ເກັ່ຽ**-ການເຈຣະຈາໄກ່ເກັ່ຽຈະຖືກເອົາໃຫ້ແກ່ທ່ານໂດຍບໍ່ຄິດຄ່າເພື່ອຈະຊ່ວຍແກ້ໄຂຄວາມຂັດແຍ້ງ. ການເຈຣະຈາໄກ່ເກັ່ຽໄດ້ຖືກສະເນີໃຫ້ເປັນທາງອອກສຳລອງຕໍ່ການຟັງເຣື່ອງຈາກອຳນາດການປົກຄອງທີ່ເປັນທາງການ. ການເຈຣະຈາໄກ່ເກັ່ຽເປັນການດຳເນີນການຕາມສະມັກໃຈ.
- **ການບໍຣິການອູ້ມຊູຊ່ວຍເຫລືອ**-ອັນນີ້ແມ່ນໂຄງການທີ່ຈະເອົາລາຍຣະອຽດໃຫ້ທ່ານ ແລະ ຊ່ວຍເຫລືອທ່ານວາງແຜນວ່າຈະແກ້ໄຂບັນຫາໄດ້ແນວໃດ. ອົງການອູ້ມຊູຊ່ວຍເຫລືອບ່ອນນຶ່ງແມ່ນ PAVE (ເບິ່ງຢູ່ຫນ້າ11). FRCຂອງທ່ານສາມາດເອົາລາຍຣະອຽດໃຫ້ທ່ານກ່ຽວກັບການບໍຣິການອູ້ມຊູຊ່ວຍເຫລືອຢູ່ໃນເຂດຂອງທ່ານ.
- **ການຟັງເຣື່ອງຕາມສິດທິທາງສານ (ການດຳເນີນການທາງສານ)** -ອັນນີ້ແມ່ນການຟັງເຣື່ອງຫລືການດຳເນີນການທາງສານທາງການທີ່ຖືກດຳເນີນໂດຍເຈົ້າຫນ້າທີ່ການຟັງເຣື່ອງຈາກອຳນາດການປົກຄອງ.ຄຳຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງຕ້ອງເປັນລາຍລັກອັກສອນ ແລະ ລວມເອົາຄຳຮ້ອງທຸກ.ໃສ່ທີ່ຢູ່ໃນຄຳຮ້ອງຂໍໄປຫາຜູ້ອຳນວຍການຂອງຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນ ຫລື ຜູ້ມີສັນຍາເຮັດການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທ້ອງຖິ່ນຂອງທ່ານ. FRC ຂອງທ່ານສາມາດເອົາຊື່ ແລະ ທີ່ຢູ່ຂອງເຂົາເຈົ້າໃຫ້ທ່ານ ຫລື ວ່າທ່ານສາມາດໂທຫາ **360-725-3500** ແລະ ຂໍເອົາຄວາມຊ່ວຍເຫລືອ.

ພໍ່ແມ່ຄົນໃດຄົນນຶ່ງ, ບຸກຄົນ ຫລື ອົງການອື່ນໆຈະຍື່ນຄຳຮ້ອງທຸກທາງອຳນາດການປົກຄອງຖ້າຫາກວ່າທ່ານຄິດວ່າຫ້ອງການ ຫລື ຜູ້ໃຫ້ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນໄດ້ລ່ວງລະເມີດກົດກຳນົດຂອງກົດຫມາຍ. ຄຳຮ້ອງທຸກຕ້ອງເປັນຫນັງສື, ຖືກເຊັນຊື່ໃສ່ ແລະ ລວມເອົາຂໍ້ມູນຄວາມຈິງກ່ຽວກັບຄຳຮ້ອງທຸກ.

ສົ່ງຄຳຮ້ອງທຸກໄປທີ່:

**Early Support for Infants and Toddlers**
**Department of Early Learning**
**PO Box 40970**
**Olympia, WA  98504-0970**

ຄຳຮ້ອງທຸກຈະຖືກກວດເບິ່ງຄືນແລະຄຳຕອບຈະຖືກຂຽນອອກມາພາຍໃນ 60 ວັນ.



## ຂ້າພະເຈົ້າສາມາດໄປໃສເພື່ອຄວາມຊ່ວຍເຫລືອ ຫລື ຣາຍຣະອຽດເພີ້ມເຕີມ?

ອົງການ ແລະ ກຸ່ມຕໍ່ລົງໄປນີ້ສາມາດເອົາຣາຍຣະອຽດເພີ້ມເຕີມໃຫ້, ການຊ່ວຍເຫລືອ ແລະ ການອູ້ມຊູ:

▶ **Family Health Hotline**
**1-800-322-2588**
ແວບໄຊທ໌: **www.withinreachwa.org**

ສາຍດ່ວນອັນນີ້ຮັກສາຣາຍຣະອຽດປັດຈຸບັນກ່ຽວກັບບ່ອນຊ່ວຍເຫລືອການເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງຫລວງ ແລະ ເອກຊົນ, ລວມທັງຜູ້ປະສານງານຊ່ວຍເຫລືອຄອບຄົວ (FRC). ມັນຍັງຈະລວມເອົາຣາຍຣະອຽດກ່ຽວກັບການສັກຢາກັນໂຣກອີກຄືກັນ, ອາຫານການກິນ ແລະ ການບໍຣິການສຸຂະພາບເດັກນ້ອຍອື່ນໆທີ່ມີໄວ້ໃຫ້ຢູ່ໃນຣັດວໍຊິງຕັນ.

▶ **Washington State Department of Early Learning (DEL)**
**Early Support for Infants and Toddlers (ESIT) program**
**360-725-3500**
ແວບໄຊທ໌: **www.del.wa.gov/esit**

ຊີ້ນຳໄປຫາຣະບົບ IDEA, ທົ່ວຣັດ, ພາກ C ຂອງການເຂົ້າແຊກແຊງແຕ່ເລີ້ມຕົ້ນ.

▶ **Parent to Parent**
**1-800-821-5927**
ແວບໄຊທ໌: **www.arcwa.org**

ສາຍງານພໍ່ແມ່ທົ່ວຣັດຊຶ່ງເອົາການອູ້ມຊູທາງດ້ານຈິດໃຈ ແລະ ຣາຍຣະອຽດໃຫ້ແກ່ພໍ່ແມ່ຜູ້ທີ່ມີເດັກນ້ອຍຍັງນ້ອຍໆຢູ່ທີ່ມີຄວາມເສັຽອົງຄະ ຫລື ການຊັກຊ້າໃນການຈະເຣີນເຕີບໂຕ.



▶ **Washington State Father's Network**
**425-747-4004 ext. 218**
ແວບໄຊທ໌: **www.fathersnetwork.org**

ອູ້ມຊູສະນັບສະນູນສຳລັບ, ແລະ ເອົາການອູ້ມຊູ ແລະ ບ່ອນຊ່ວຍເຫລືອໃຫ້ສຳລັບ, ຜູ້ຊາຍທຸກໆຄົນ ແລະ ຄອບຄົວທີ່ມີເດັກນ້ອຍທີ່ມີຄວາມຕ້ອງການພິເສດ.

▶ **Washington PAVE**
**(Partnerships for Action, Voices for Empowerment)**
**1-800-5PARENT**
ແວບໄຊທ໌: **www.wapave.org**

ສູນກາງຝຶກຝົນ ແລະ ຣາຍຣະອຽດສຳລັບພໍ່ແມ່ທົ່ວຣັດທີ່ເອົາຄວາມຊ່ວຍເຫລືອໃຫ້ແກ່ຄອບຄົວທີ່ມີເດັກນ້ອຍມີຄວາມເສັຽອົງຄະແຕ່ກຳເນີດໄປເຖິງເປັນໜຸ່ມ.

## ຂ້າພະເຈົ້າສາມາດກ່ຽວພັນນຳຫລາຍກວ່າໄດ້ແນວໃດ?

ທ່ານມີບົດບາດອັນສຳຄັນໃນການວາງແຜນ ແລະ ການອອກແບບໂຄງການ ແລະ ການບໍລິການສຳລັບລູກຂອງທ່ານ. ທ່ານຍັງສາມາດເຂົ້າຮ່ວມໃນການວາງແຜນໄດ້ອີກວ່າຊຸມນຸມຊົນຂອງທ່ານເອົາການບໍລິການໃຫ້ໄດ້ແນວໃດ.

ການວາງແຜນອັນນີ້ໄດ້ຖືກເຮັດໃນລະດັບຄາວຕີໂດຍຜ່ານສະພາປະສານງານລະຫວ່າງຫ້ອງການຂອງຄາວຕີ (CICC). CICC ແຕ່ລະບ່ອນໄດ້ຖືກບົ່ງໃຫ້ມີພໍ່ແມ່ເປັນສະມາຊິກຢູ່ໃນສະພາ. ລວມກັນກັບສາມາຊິກອື່ນທັງຫມົດ, ພໍ່ແມ່ຕັດສິນໃຈວ່າການບໍລິການຈະສາມາດເກີດຂື້ນໄດ້ດີທີ່ສຸດແນວໃດ.

ການປະຊຸມ CICC ໄດ້ຖືກເປີດກວ້າງໃຫ້ສາທາລະນະຊົນເຂົ້າຮ່ວມນຳ. ອັນນີ້ແມ່ນສະພາປະສານງານລະຫວ່າງຫ້ອງການຂອງຣັດ (SICC). ສະພາອັນນີ້ຕ້ອງມີການເປັນຕົວແທນຈາກພໍ່ແມ່ອີກຄືກັນ. ການປະຊຸມ SICC ໄດ້ຖືກເປີດກວ້າງໃຫ້ສາທາລະນະຊົນເຂົ້າຮ່ວມນຳ. ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບເວລາ ແລະ ສະຖານທີ່ຂອງການປະຊຸມໃຫ້ຕິດຕໍ່ຫາຜູ້ປະສານງານຊ່ວຍເຫລືອຄອບຄົວຂອງທ່ານ, ESIT, ແວ່ເຂົ້າເບິ່ງແວບໄຊທ໌ໄດ້ທີ່ **www.del.wa.gov/esit**.

ປື້ມຄູ່ມືຫົວນີ້ເປັນການສະລູບຄວາມຂອງໂຄງການອູ້ມຊູແຕ່ເລີ້ມຕົ້ນສຳລັບເດັກທາຣົກ ແລະ ເດັກກຳລັງຮຽນຍ່າງຂອງຣັດວໍຊິງຕັນ. ເພື່ອລາຍລະອຽດອັນຄົບຖ້ວນກ່ຽວກັບໂຄງການທີ່ຖືກອະນຸມັດຂອງຣັດວໍຊິງຕັນພາຍໃຕ້ IDEA ຫລື ສຳລັບລາຍລະອຽດເພີ້ມເຕີມກ່ຽວກັບບໍ່ວ່າຈະເປັນ CICC ຫລື SICC ຂອງທ່ານ, ໃຫ້ຕິດຕໍ່ຫາໂຄງການອູ້ມຊູແຕ່ເລີ້ມຕົ້ນສຳລັບເດັກທາຣົກ ແລະ ເດັກກຳລັງຮຽນຍ່າງຂອງຣັດວໍຊິງຕັນໄດ້ທີ່
**360-725-3500**.

**www.del.wa.gov/esit**



# ມັນຫມາຍຄວາມວ່າຢ່າງໃດ? (ການອະທິບາຍຄຳສັບ)

### ການກວດກັ່ນກອງ
ລາຍການກວດເບິ່ງໄວໆ ຫລື ການສຳຣວດກ່ຽວກັບການຈະເຣີນເຕີບໂຕຂອງລູກຂອງທ່ານເພື່ອຈະເບິ່ງວ່າການຕີຣາຄາຕໍ່ໄປອີກແມ່ນຕ້ອງການ ຫລື ບໍ່.

### ການເຂົ້າແຊກແຊງແຕ່ເລີ້ມຕົ້ນ
ການເກັບກຳຮີບໂຮມເອົາການບໍຣິການທີ່ຖືກເອົາໃຫ້ໂດຍຫ້ອງການຂອງຫລວງແລະເອກຊົນ ແລະ ຖືກເຮັດອອກມາໂດຍກົດຫມາຍເພື່ອຈະອູ້ມຊູຊ່ວຍເຫລືອເດັກນ້ອຍ ແລະ ຄອບຄົວທີ່ມີເງື່ອນໄຂໄດ້ຮັບໃນການເນັ້ນຫນັກໃສ່ໂອກາດສຳລັບການເຕີບໂຕ ແລະ ການຂະຍາຍໂຕຂອງເດັກນ້ອຍຕັ້ງແຕ່ກຳເນີດຮອດອາຍຸ 3 ປີ.

### ການເຈຣະຈາໄກ່ເກັ່ຽ
ການດຳເນີນການທີ່ບໍ່ເປັນທາງການຊຶ່ງໃນນັ້ນບຸກຄົນຜູ້ທີ່ຖືກຝຶກຝົນມາ, ບໍ່ລຳອຽງເຂົ້າຂ້າງໃຜ, ຈະຊ່ວຍທັງສອງຝ່າຍທີ່ຂັດແຍ້ງກັນໃຫ້ແກ້ໄຂຄວາມແຕກຕ່າງ ແລະ ຊອກຫາທາງແກ້ໄຂບັນຫາທີ່ເປັນທີ່ເພິ່ງພໍໃຈໃຫ້ແກ່ທຸກຝ່າຍ.

### ການຕີຣາຄາ
ວິທີການທີ່ຖືກໃຊ້ໂດຍນັກວິຊາການຜູ້ທີ່ມີຄຸນນະວຸດທິເພື່ອຈະພິຈາຣະນາເບິ່ງເງື່ອນໄຂໄດ້ຮັບການຊ່ວຍເຫລືອໃນຂັ້ນຕົ້ນ ແລະ ດຳເນີນຕໍ່ໄປຂອງເດັກນ້ອຍ, ຊຶ່ງມຸ່ງຫມາຍໃສ່ການພິຈາຣະນາເບິ່ງສະພາບຂອງເດັກທາຣົກ ຫລື ເດັກນ້ອຍກຳລັງຮຽນຍ່າງຢູ່ໃນຂະແນງຂອງການຈະເຣີນເຕີບໂຕທຸກໆຢ່າງ; ການຮັບຮູ້, ສັງຄົມ/ຈິດໃຈ, ຮ່າງກາຍ (ລວມທັງການເບິ່ງ ແລະ ການຟັງສຽງ) , ການຕິດຕໍ່ກັນ ແລະ ການປັບຕົວ.

### ການຕີຣາຄາປະເມີນຜົນ
ວິທີການທີ່ດຳເນີນຕໍ່ໄປທີ່ຖືກໃຊ້ໂດຍນັກວິຊາການຜູ້ທີ່ມີຄຸນນະວຸດທິຕະລອດປະສົບປະການຂອງການເຂົ້າແຊກແຊງແຕ່ເລີ້ມຕົ້ນຂອງເດັກນ້ອຍເພື່ອຈະຊີ້ບອກຄວາມຕ້ອງການໂດຍສະເພາະຂອງເຂົາເຈົ້າ; ຊັບສິນຂອງຄອບຄົວ; ຣະດັບຄວາມສຳຄັນ ແລະຄວາມກັງວົນທີ່ກ່ຽວພັນນຳການຈະເຣີນເຕີບໂຕຂອງເຂົາເຈົ້າ; ແລະ ສະພາບ ແລະ ຈຳນວນການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນທີ່ຕ້ອງການເພື່ອຈະຕອບສະນອງຄວາມຕ້ອງການ.

### ການເບິ່ງແຍງດູແລທີ່ປຸ້ມລຸມໃສ່ຄອບຄົວ
ທິດສະດີທີ່ສົ່ງເສີມພໍ່ແມ່ໃຫ້ເປັນຜູ້ທຳການຕັດສິນໃຈ ແລະ ກໍ່ສ້າງຄວາມຮ່ວມມືເຮັດວຽກນຳກັນຣະຫວ່າງພໍ່ແມ່/ນັກວິຊາການ.

### ການບໍຣິການເທັກໂນໂລຈີຊ່ວຍເຫລືອ
ການບໍຣິການທີ່ຊ່ວຍເຫລືອເດັກນ້ອຍທີ່ມີຄວາມເສັຽອົງຄະໂດຍກົງເພື່ອຈະເລືອກເອົາ, ໄດ້ຮັບ ຫລື ໃຊ້ເຄື່ອງເທັກໂນໂລຈີຊ່ວຍເຫລືອ.

### ການພົບເຫັນຂອງເດັກນ້ອຍ
ລວມເອົາການຊີ້ຕົວແຕ່ເລີ້ມຕົ້ນ, ການກວດກັ່ນເບິ່ງ, ການສົ່ງຕໍ່ ແລະ ການປະສານງານການບໍຣິການຂັ້ນຕົ້ນ.

### ການຟັງເຣື່ອງຈາກອຳນາດການປົກຄອງ
ການດຳເນີນການໂດຍທາງການນຳບຸກຄົນເປັນກາງ, ເຈົ້າຫນ້າທີ່ການຟັງເຣື່ອງ, ຜູ້ທີ່ຈະຟັງເບິ່ງຫລັກຖານ ແລະ ການຖົກຖຽງກັນຂອງພໍ່ແມ່/ຄອບຄົວ ແລະ ຫ້ອງການ ແລະ ຈະຕັດສິນວ່າຜູ້ໃດຖືກ ແລະ ຜູ້ໃດຕ້ອງເຮັດອັນໃດ.

### ການລວມເຂົ້າກັນຫລາຍໆຢ່າງ
ການກ່ຽວພັນນຳຂອງກົດຣະບຽບ ຫລື ວິຊາຊີບສອງຢ່າງ ຫລື ຫລາຍກວ່າໃນການໃຫ້ການບໍຣິການທີ່ລວມເຂົ້າໃສ່ກັນ ແລະ ປະສານງານກັນລວມທັງກິຈກັມການຕີຣາຄາ ແລະ ການປະເມີນຜົນ, ແລະ ການອອກແບບແຜນ IFSP.

### ເຄື່ອງເທັກໂນໂລຈີຊ່ວຍເຫລືອ
ສິ່ງໃດສິ່ງນຶ່ງ, ຊີ້ນສ່ວນຂອງອຸບປະກອນ ຫລື ຣະບົບຂອງເຄື່ອງໃຊ້ທີ່ຖືກໃຊ້ເພື່ອຈະເພີ້ມຂຶ້ນ, ຮັກສາ ຫລື ສົ່ງເສີມຄວາມສາມາດຂອງເດັກນ້ອຍທີ່ຈະເຮັດສິ່ງຕ່າງໆ (ຕົວຢ່າງວ່າ; ກິນ, ຕິດຕໍ່ເວົ້າກັນ, ຍ້າຍທີ່) .

### ຄຳແຈ້ງການຂອງຄອບຄົວ
ຄຳແຈ້ງການທີ່ຖືກສົ່ງອອກມາຈາກຄອບຄົວກ່ຽວກັບຄວາມກັງວົນ, ຣະດັບຄວາມສຳຄັນ ແລະ ຊັບສິນບັດຂອງຄອບຄົວລວມທັງແຜນການບໍຣິການຄອບຄົວສ່ວນບຸກຄົນ (IFSP).

### ສະພາບແວດລ້ອມຕາມທັມມະຊາດ
ສະພາບທີ່ເປັນທັມມະຊາດ ຫລື ປົກກະຕິສຳລັບຫມູ່ອາຍຸດຽວກັນຂອງເດັກນ້ອຍຜູ້ທີ່ບໍ່ມີຄວາມເສັຽອົງຄະ. ອັນນີ້ອາດຈະລວມເອົາເຮືອນ, ຫມູ່ບ້ານ ຫລື ສະພາບພື້ນທີ່ຕາມຊຸມນຸມຊົນ.

### ເດັກທາຣົກ ແລະ ເດັກນ້ອຍກຳລັງຮຽນຍ່າງທີ່ມີຄວາມເສັຽອົງຄະ
ເດັກນ້ອຍແຕ່ກຳເນີດຮອດອາຍຸ 3 ປີຜູ້ທີ່ມີເງື່ອນໄຂໄດ້ຮັບການເຂົ້າແຊກແຊງແຕ່ເລີ້ມຕົ້ນຍ້ອນວ່າເຂົາເຈົ້າໄດ້ພົ້ກັບການປ່ຽນແປງໃນມາຕຖານ 1.5 ຫລື ການຊັກຊ້າໃນການຈະເຣີນເຕີບໂຕຢ່າງຫນ້ອຍ 25 ເປີເຊັນໃນຈຳພວກຕໍ່ລົງໄປນີ້ອັນນຶ່ງ ຫລື ຫລາຍອັນ: ການຮັບຮູ້, ຮ່າງກາຍ, ການຕິດຕໍ່, ສັງຄົມ/ຈິດໃຈ ຫລື ການປັບຕົວ; ຫລື ມີສະພາບຮ່າງກາຍ ຫລື ຈິດໃຈທີ່ຖືກກວດພົບວ່າມີຄວາມເປັນໄປໄດ້ສູງເຖິງການຊັກຊ້າໃນການຈະເຣີນເຕີບໂຕ.

### ແຜນການບໍຣິການຄອບຄົວສ່ວນບຸກຄົນ (IFSP)
ແຜນການເປັນລາຍລັກອັກສອນສຳລັບການເອົາການເຂົ້າແຊກແຊງແຕ່ເລີ້ມຕົ້ນ ແລະ ການບໍຣິການອື່ນໆໃຫ້ແກ່ເດັກນ້ອຍ ແລະ ຄອບຄົວທີ່ມີເງື່ອນໄຂໄດ້ຮັບຊຶ່ງ: (1) ຖືກເຮັດອອກມາຮ່ວມກັນໂດຍຄອບຄົວ ແລະ ຜູ້ຊ່ຽວຊານທີ່ເຫມາະສົມ: (2) ຖືກອີງໃສ່ການຕີຣາຄາ ແລະ ການປະເມີນຜົນລວມເຂົ້າໃສ່ກັນຫລາຍໆຢ່າງຂອງເດັກນ້ອຍ ແລະ ຄອບຄົວ: (3) ມີຄຳແຈ້ງການທີ່ຖືກສົ່ງອອກມາຈາກຄອບຄົວກ່ຽວກັບຊັບສິນບັດ, ຣະດັບຄວາມສຳຄັນ ແລະ ຄວາມກັງວົນຖ້າຫາກວ່າຄອບຄົວປະສົງ; ແລະ (4) ລວມເອົາການບໍຣິການທີ່ຈຳເປັນເພື່ອຈະເນັ້ນຫນັກໃສ່ການຈະເຣີນເຕີບໂຕຂອງເດັກນ້ອຍ ແລະ ຄວາມສາມາດຂອງຄອບຄົວທີ່ຈະຕອບສະນອງຄວາມຕ້ອງການດ້ານການຈະເຣີນເຕີບໂຕຂອງເຂົາເຈົ້າ.

### ແຜນການຜັນປ່ຽນ
ແຜນການທີ່ຖືກເຮັດອອກມາສຳລັບລູກຂອງທ່ານເມື່ອອອກຈາກການເຂົ້າແຊກແຊງແຕ່ເລີ້ມຕົ້ນໃນອາຍຸ 3 ປີ.

### ຜົນອອກມາ
ຄຳແຈ້ງການຂອງການປ່ຽນແປງທີ່ທ່ານຢາກຈະເຫັນໃນລູກ ແລະ ຄອບຄົວຂອງທ່ານຕາມຜົນອອກມາຂອງການເຂົ້າແຊກແຊງແຕ່ເລີ້ມຕົ້ນ. ຄຳແຈ້ງການເຫລົ່ານີ້ເປັນພາກສ່ວນຂອງ IFSP ຂອງທ່ານ.

### ພໍ່ແມ່ແທນທີ່
ບຸກຄົນທີ່ຖືກແຕ່ງຕັ້ງໂດຍຫ້ອງການທ້ອງຖິ່ນ ຫລື ຣັດເພື່ອຈະທຳຕົວແທນທີ່ຂອງພໍ່ແມ່ ຫລື ຜູ້ປົກຄອງຕາມກົດຫມາຍໃນການປ້ອງກັນສິດທິຂອງເດັກນ້ອຍໃນການດຳເນີນການຕັດສິນໃຈ.

# ການຮັບຮູ້

**The Family Guidelines Workgroup,** ສະພາປະສານງານລະຫວ່າງຫ້ອງການຂອງລັດ (SICC) ໄດ້ອອກແບບແຜນປື້ມຄູ່ມືຫົວນີ້ອອກມາ.

ຈຸດປະສົງຂອງມັນແມ່ນເພື່ອຈະຊ່ວຍເຫລືອພໍ່ແມ່ຂອງເດັກທາຣົກ ແລະ ເດັກກຳລັງຮຽນຍ່າງທີ່ມີຄວາມເສັຽອົງຄະໃຫ້ເຂົ້າໃຈການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນພາຍໃຕ້ກົດຫມາຍການສຶກສາກ່ຽວກັບບຸກຄົນທີ່ມີຄວາມເສັຽອົງຄະ (IDEA).



ຄວາມຂອບໃຈພິເສດສຸດໃຫ້ແກ່ຄອບຄົວຜູ້ທີ່ອະນຸຍາດຢ່າງເຕັມໃຈທີ່ສຸດໃຫ້ພວກໃຊ້ຮູບພາບຂອງເຂົາເຈົ້າ ແລະ ແບ່ງປັນເວລາ ແລະ ເຣື່ອງຣາວຂອງເຂົາເຈົ້ານຳພວກເຮົາ.

ຄວາມຂອບໃຈຫລາຍໆມາຍັງສະມາຊິກຂອງສະພາສຳລັບເວລາຫລາຍຊົ່ວໂມງທີ່ໄດ້ຖືກໃຊ້ໃນການອອກແບບເຣັດປື້ມຄູ່ມືຫົວນີ້ອອກມາ.

| | |
|---|---|
| Donna White, Chair | Department of Health, Maternal ແລະ Child Health |
| Catherine Davis | ໂຄງການເດັກທາຣົກແຕ່ກຳເນີດຫາທົກປີຂອງຊົນເຜົ່າ Puyallup |
| Heather Hebdon | ໂຄງການ Specialized Training of Military Parents (STOMP) Project |
| Kathy Hormann | Child Development Center, Sumner |
| Cassie Johnston | Washington PAVE, ຜູ້ປະສານງານການເຂົ້າຮ່ວມຂອງພໍ່ແມ່ |
| Lynne Leeper | Washington PAVE, ໂຄງການຝຶກຝົນສຳລັບພໍ່ແມ່ |
| Melanie Stafford | Us–Qwed–Eeth, ໂຄງການເດັກທາຣົກແຕ່ກຳເນີດຫາທົກປີຂອງຊົນເຜົ່າ Puyallup |
| Kathy Blodgett, ພະນັກງານ | ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ, ໂຄງການ Washington State Infant Toddler Early Intervention |
| Barbie Faubion, ພະນັກງານ | ກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ, ໂຄງການ Washington State Infant Toddler Early Intervention |

ຂອບໃຈສຳລັບພໍ່ແມ່ຄົນອື່ນໆແລະນັກວິຊາການຜູ້ທີ່ອອກແນວຄິດຂອງເຂົາເຈົ້າຮ່ວມນຳລວມເອົາ:
Rita Dickey, Linda Gil, Terri Larson, Kathy Lollar, Julie Martino, Kathie Moudy, Joni Strong, Diana Sandoval ແລະ Debbie Yanak.

ການຮັບຮູ້ພິເສດໃຫ້ແກ່ຣັດ Maryland ແລະ Pennsylvania ຊຶ່ງວ່າປື້ມຄູ່ມືຂອງເຂົາເຈົ້າໄດ້ຖືກໃຊ້ໃຫ້ເປັນແບບຢ່າງສຳລັບປື້ມຄູ່ມືຂອງຣັດ Washington

ຮູບພາບດ້ວຍຄວາມເອື້ອເຟື້ອຈາກ Marv Bilderback ຢູ່ທີ່ບໍຣິສັດ Pacific Photographs ແລະ ສູນກາງ Sumner Child Development Center.

---

ການແບ່ງແຍກຊົນຊັ້ນວັນນະແມ່ນຖືກຫວງຫ້າມບໍ່ໃຫ້ມີຢູ່ໃນທຸກໆໂຄງການ ຫລື ກິຈກັມ. ບໍ່ມີຄົນໃດຈະຖືກຍົກເວັ້ນອອກໄປຍ້ອນພື້ນຖານຂອງຜິວພັນ, ສີສັນ, ສາສະນາ, ລັດທິ, ເຊື້ອຊາດດັ້ງເດີມ, ເພດ, ອາຍຸ ຫລື ຄວາມເສັຽອົງຄະ.

Washington State Department of Early Learning

Early Support for Infants and Toddlers

ທີ່ຢູ່ແວບໄຊທ໌ຂອງພວກເຮົາແມ່ນ:

**www.del.wa.gov/esit/**

ປື້ມຄູ່ມືໄປສູ່ການບໍຣິການເຂົ້າແຊກແຊງແຕ່ເລີ້ມຕົ້ນຢູ່ໃນຣັດວໍຊິງຕັນສຳລັບຄອບຄົວ.

DEL 11-005 LA (5/11)